ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ — ເລກທີ 1684/ປທສ

ນະຄອນຫຼວງວຽງຈັນ, ວັນທີ 5 ເມສາ 2017

# ຂໍ້ຕົກລົງ
# ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ
# ອົງການດັດສົມໂທລະຄົມມະນາຄົມ

- ອີງຕາມ ດຳລັດນາຍົກລັດຖະມົນຕີ ສະບັບເລກທີ 22/ນຍ, ລົງວັນທີ 16 ມັງກອນ 2017 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.
- ອີງຕາມ ດຳລັດນາຍົກລັດຖະມົນຕີ ສະບັບເລກທີ 109/ນຍ, ລົງວັນທີ 27 ມີນາ 2017 ວ່າດ້ວຍການສ້າງຕັ້ງອົງການດັດສົມໂທລະຄົມມະນາຄົມ.

## ລັດຖະມົນຕີ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ອອກຂໍ້ຕົກລົງ:

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງທາງດ້ານນິຕິກຳໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ຂອງອົງການດັດສົມໂທລະຄົມມະນາຄົມ ແນ່ໃສ່ຈັດຕັ້ງຜັນຂະຫຍາຍແນວທາງຂອງພັກ, ປະຕິບັດກົດໝາຍ ແລະ ລະບຽບການຂອງລັດກ່ຽວກັບວຽກງານດັດສົມໂທລະຄົມມະນາຄົມ.

**ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ**

ອົງການດັດສົມໂທລະຄົມມະນາຄົມ ຂຽນເປັນຕົວອັກສອນຫຍໍ້ວ່າ “ອດທ” ຂຽນເປັນພາສາອັງກິດ “ Lao Telecommunications Regulatory Authority ” “LTRA” ແມ່ນກົງຈັກໜຶ່ງຂອງກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຊຶ່ງມີຖານະເທົ່າກົມ, ມີພາລະບົດບາດເປັນເສນາທິການໃຫ້ແກ່ກະຊວງໃນການຄຸ້ມຄອງວຽກງານດັດສົມໂທລະຄົມມະນາຄົມ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

3.1 ຜັນຂະຫຍາຍແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ເພື່ອສ້າງເປັນແຜນນະໂຍບາຍ, ແຜນຍຸດທະສາດກ່ຽວກັບວຽກດ້ານໂທລະຄົມມະນາຄົມ ເພື່ອສະເໜີຂັ້ນເທິງພິຈາລະນາຮັບຮອງ ພ້ອມທັງຈັດຕັ້ງປະຕິບັດ, ຕິດຕາມກວດກາ ແລະ ຖອດຖອນບົດຮຽນ;

3.2 ຄົ້ນຄ້ວາ, ສ້າງ ແລະ ປັບປຸງກົດໝາຍ ແລະ ບັນດານິຕິກຳຕ່າງໆ ກ່ຽວກັບວຽກງານດັດສົມໂທລະຄົມມະນາຄົມໃຫ້ແທດເໝາະກັບສະພາບການພັດທະນາເສດຖະກິດ-ສັງຄົມ ແຕ່ລະໄລຍະ;

3.3 ຄຸ້ມຄອງ, ກວດກາການເຄື່ອນໄຫວດ້ານວິຊາການ ຂອງບັນດາບໍລິສັດ, ວິສະຫະກິດ ແລະ ຫົວໜ່ວຍທຸລະກິດດ້ານໂທລະຄົມມະນາຄົມ ແລະ ອິນເຕີເນັດ ໃນການປະຕິບັດຕາມກົດໝາຍ ແລະ ລະບຽບການກຳນົດ; ຄຸ້ມຄອງ ແລະ ບໍລິຫານ ແຜນການຈັດສັນເລກໝາຍໂທລະສັບທຸກລະບົບ ຂອງ ສປປ ລາວ;

3.4 ຄົ້ນຄ້ວາການອະນຸຍາດ, ໂຈະ, ຍົກເລີກ ຫຼື ຖອນໃບອະນຸຍາດການດຳເນີນທຸລະກິດດ້ານໂທລະຄົມມະນາຄົມ, ການນຳໃຊ້ເລກໝາຍໂທລະສັບ, ການຕິດຕັ້ງ ແລະ ນຳໃຊ້ພື້ນຖານໂຄງລ່າງ;

3.5 ຮັບຄຳຮ້ອງຟ້ອງ ແລະ ໄກ່ເກ່ຍ, ແກ້ໄຂຂໍ້ຂັດແຍ່ງ ພ້ອມທັງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງເພື່ອແກ້ໄຂຂໍ້ຂັດແຍ່ງກ່ຽວກັບ ການດຳເນີນທຸລະກິດດ້ານໂທລະຄົມມະນາຄົມ ແລະ ອິນເຕີເນັດ;

3.6 ຄຸ້ມຄອງຄຸນນະພາບການບໍລິການ ແລະ ມາດຕະຖານເຕັກນິກໂທລະຄົມມະນາຄົມຕາມມາດຕະຖານສາກົນ;

3.7 ຄຸ້ມຄອງການແຂ່ງຂັນດ້ານໂທລະຄົມມະນາຄົມທີ່ເປັນທຳ ແລະ ຖືກຕ້ອງ, ສອດຄ່ອງຕາມລະບຽບກົດໝາຍ;

3.8 ດັດສົມການດຳເນີນທຸລະກິດຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຕ່າງໆ ກ່ຽວກັບວຽກງານໂທລະຄົມມະນາຄົມ ແລະ ອິນເຕີເນັດ; ປະສານສົມທົບກັບອົງການຈັດຕັ້ງທີ່ກ່ຽວຂ້ອງແຕ່ສູນກາງຫາທ້ອງຖິ່ນ ກ່ຽວກັບການຄຸ້ມຄອງວຽກງານດັດສົມໂທລະຄົມມະນາຄົມ;

3.9 ຄົ້ນຄ້ວາການອອກໃບສັ່ງມອບຄ່າທຳນຽມ, ຄ່າບໍລິການດ້ານໂທລະຄົມມະນາຄົມ ແລະ ອິນເຕີເນັດ, ຄ່າເລກໝາຍໂທລະຄົມມະນາຄົມຕໍ່ບໍລິສັດ, ລັດວິສະຫະກິດ ແລະ ຫົວໜ່ວຍທຸລະກິດອື່ນໆ;

3.10 ເກັບກຳສະຖິຕິການພັດທະນາພື້ນຖານໂຄງລ່າງ, ການນຳໃຊ້ເລກໝາຍໂທລະຄົມມະນາຄົມ ແລະ ກຳນົດຕົວຊີ້ວັດໃນການຂະຫຍາຍຕົວດ້ານວຽກງານດັດສົມໂທລະຄົມມະນາຄົມ;

3.11 ຄົ້ນຄ້ວາມາດຕະຖານເຕັກນິກດ້ານໂທລະຄົມມະນາຄົມໃຫ້ສອດຄ່ອງຕາມມາດຕະຖານສາກົນ;

3.12 ສ້າງແຜນລາຍຮັບ-ລາຍຈ່າຍ ດ້ານວິຊາການຂອງອົງການ ແລະ ຄຸ້ມຄອງ, ນຳໃຊ້ຊັບສິນ, ງົບປະມານຕາມການອະນຸມັດຂອງ ລັດຖະມົນຕີ;